# ສັນຍາ ວ່າດ້ວຍ ດ່ານຊາຍແດນ
# ແລະ ລະບຽບການຄຸ້ມຄອງດ່ານຊາຍແດນ
# ລະຫວ່າງ
# ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
# ແລະ
# ລັດຖະບານ ແຫ່ງ ສາທາລະນະລັດ ປະຊາຊົນຈີນ

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາຊົນຈີນ ( ຕໍ່ໄປເອີ້ນວ່າ: " ສອງຝ່າຍ " ), ເພື່ອເສີມສ້າງ ແລະ ພັດທະນາສາຍພົວພັນມິດຕະພາບຖານບ້ານໃກ້ເຮືອນຄຽງທີ່ເປັນມູນເຊື້ອຂອງປະຊາຊົນສອງຊາດ, ຊຸກຍູ້ການພັດທະນາການຄ້າ ແລະ ການໄປມາຫາສູ່ຂອງພົນລະເມືອງສອງປະເທດ, ບົນພື້ນຖານຄວາມສະເໝີພາບ ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ, ຈຶ່ງໄດ້ຕົກລົງກັນດັ່ງລຸ່ມນີ້:

## ມາດຕາ 1

ໃນສັນຍາສະບັບນີ້, ສອງຝ່າຍໄດ້ນິຍາມ ດັ່ງນີ້:

1. "ດ່ານຊາຍແດນ" ໝາຍເຖິງສະຖານທີ່ ທີ່ຕັ້ງຢູ່ສອງຟາກຊາຍແດນ ລາວ-ຈີນ ທາງບົກ, ເປັນເຂດທີ່ໄດ້ຮັບການອະນຸມັດຈາກລັດຖະບານຂອງສອງປະເທດ ເພື່ອອະນຸຍາດໃຫ້ບຸກຄົນ, ຍານພາຫະນະ, ສິນຄ້າ ແລະ ສິ່ງຂອງ ຜ່ານເຂົ້າ-ອອກຕາມຊາຍແດນໄດ້ໂດຍກົງ, ຊຶ່ງລວມທັງ ດ່ານແຫ່ງຊາດສອງຝ່າຍ ແລະ ດ່ານສາກົນ.

   ດ່ານແຫ່ງຊາດສອງຝ່າຍ ໝາຍເຖິງດ່ານທີ່ອະນຸຍາດໃຫ້ບຸກຄົນ, ຍານພາຫະນະຂົນສົ່ງ, ສິນຄ້າ ແລະ ສິ່ງຂອງ ຂອງສອງຝ່າຍ ຜ່ານເຂົ້າ-ອອກຕາມຊາຍແດນໄດ້. ດ່ານສາກົນ ໝາຍເຖິງດ່ານທີ່ອະນຸຍາດໃຫ້ບຸກຄົນ, ຍານພາຫະນະ, ສິນຄ້າ ແລະ ສິ່ງຂອງ ຂອງສອງຝ່າຍ ແລະ ປະເທດທີສາມ ຜ່ານເຂົ້າ-ອອກຕາມຊາຍແດນໄດ້.

2. "ບໍລິເວນຊາຍແດນ" ໝາຍເຖິງເຂດອຳນາດການປົກຄອງຂັ້ນເມືອງຂອງສອງຝ່າຍ ທີ່ຕັ້ງຢູ່ສອງຟາກຂອງເສັ້ນຊາຍແດນ ລາວ-ຈີນ ທາງບົກ.

3. "ປະຊາຊົນທີ່ອາໃສຢູ່ຕາມຊາຍແດນ" ໝາຍເຖິງປະຊາຊົນທີ່ອາໄສຢູ່ຖາວອນໃນເຂດອຳນາດການປົກຄອງຂັ້ນເມືອງທີ່ຕັ້ງຢູ່ສອງຟາກຂອງເສັ້ນຊາຍແດນ ລາວ-ຈີນ ທາງບົກ.

4. "ຜູ້ຕາງໜ້າຊາຍແດນ" ໝາຍເຖິງບຸກຄົນທີ່ໄດ້ຮັບການແຕ່ງຕັ້ງໂດຍອີງຕາມກົດໝາຍຂອງແຕ່ລະປະເທດ ແລະ ສົນທິສັນຍາສະບັບນີ້ ເພື່ອຮັບຜິດຊອບກ່ຽວກັບການປົກປັກຮັກສາຄວາມເປັນລະບຽບຮຽບຮ້ອຍຢູ່ບາງຕອນຊາຍແດນໃດນຶ່ງ ພ້ອມທັງສາມາດປະສານສົມທົບ ແລະ ແກ້ໄຂບັນຫາທີ່ເກີດຂຶ້ນຕາມຊາຍແດນໄດ້ຢ່າງທັນການ.

5. "ໜ່ວຍງານກວດກາດ່ານ" ໝາຍເຖິງໜ່ວຍງານຕຳຫລວດກວດຄົນເຂົ້າ-ອອກເມືອງ, ພາສີ ແລະ ພາກສ່ວນທີ່ກ່ຽວຂ້ອງຂອງດ່ານຝ່າຍລາວ ແລະ ໜ່ວຍງານກວດກາປ້ອງກັນຊາຍແດນ, ພາສີ ແລະ ກວດກາພະຍາດຂອງດ່ານຝ່າຍຈີນ.

6. "ເຫດສຸດວິໄສ" ໝາຍເຖິງເຫດພາວະວິໄສທີ່ບໍ່ສາມາດຄາດຄະເນລ່ວງໜ້າ, ບໍ່ສາມາດຫຼີກລ່ຽງ ແລະ ຢັບຢັ້ງໄດ້.

## ມາດຕາ 2

1. ສອງຝ່າຍຕົກລົງເປີດດ່ານຊາຍແດນ ລາວ-ຈີນ ດັ່ງລຸ່ມນີ້:

| ຊື່ດ່ານຝ່າຍລາວ | ຊື່ດ່ານຝ່າຍຈີນ |
|---|---|
| ບໍ່ເຕັນ | ບໍ່ຫານ |
| ລານຕູຍ | ເມືອງຄັງ |
| ປ່າຄາ | ມານຈອງ |
| ປາງໄຮ່ | ເມືອງມານ |

2. ເນື້ອໃນລະອຽດກ່ຽວກັບທີ່ຕັ້ງ, ພາລະບົດບາດ, ລະດັບຂັ້ນ ແລະ ເວລາເຮັດວຽກຂອງດ່ານຊາຍແດນ ທີ່ໄດ້ລະບຸໄວ້ໃນຂໍ້ 1 ຂອງມາດຕານີ້ ມີລາຍລະອຽດຢູ່ໃນເອກະສານຊ້ອນທ້າຍ. ສຳລັບດ່ານຊາຍແດນທີ່ໄດ້ລະບຸໄວ້ຂ້າງເທິງ ຊຶ່ງຍັງບໍ່ທັນໄດ້ຮັບການເປີດໃຊ້ຢ່າງເປັນທາງການນັ້ນ, ສອງຝ່າຍຈະອີງຕາມສະພາບຄວາມພ້ອມທາງດ້ານເງື່ອນໄຂຕ່າງໆ ດຳເນີນການປຶກສາຫາລື ກ່ຽວກັບ ວັນເວລາເປີດດ່ານ ແລະ ເວລາເຮັດວຽກຢ່າງເປັນທາງການ ໂດຍຜ່ານທາງການທູດ.

3. ໃນກໍລະນີທີ່ສອງຝ່າຍຕ້ອງການເປີດດ່ານໃໝ່ ຫລື ປິດດ່ານຊາຍແດນ, ສອງຝ່າຍຕ້ອງປຶກສາຫາລື ແລະ ຕົກລົງກັນໂດຍຜ່ານທາງການທູດ. ເອກະສານການຕົກລົງທີ່ກ່ຽວຂ້ອງແມ່ນໃຫ້ຖືເປັນເອກະສານເພີ່ມເຕີມຂອງສົນທິສັນຍາສະບັບນີ້.

4. ຖ້າຫາກຕ້ອງການປ່ຽນແປງສະຖານທີ່ຕັ້ງ, ພາລະບົດບາດ, ຍົກລະດັບຂັ້ນຂອງດ່ານ ແລະ ເວລາເຮັດວຽກຂອງດ່ານຊາຍແດນ, ສອງຝ່າຍຕ້ອງປຶກສາຫາລື ແລະ ຕົກລົງກັນໂດຍຜ່ານທາງການທູດ. ເອກະສານການຕົກລົງທີ່ກ່ຽວຂ້ອງ ແມ່ນໃຫ້ຖືເປັນເອກະສານເພີ່ມເຕີມຂອງສັນຍາສະບັບນີ້.

5. ຖ້າຫາກເກີດເຫດສຸດວິໄສ ຫລື ກໍລະນີທີ່ຈຳເປັນອື່ນໆ, ສອງຝ່າຍສາມາດເປີດດ່ານຊົ່ວຄາວໄດ້. ການເປີດດ່ານຊົ່ວຄາວ ຕ້ອງໄດ້ຮັບການເຫັນດີຈາກສອງຝ່າຍ, ພ້ອມທັງໄດ້ຮັບການຢືນຢັນໂດຍຜ່ານທາງການທູດ. ການປະກອບເອກະສານເຂົ້າ-ອອກຕາມດ່ານຊາຍແດນຂອງບຸກຄົນ, ຍານພາຫະນະ, ສິນຄ້າ ແລະ ສິ່ງຂອງຕ່າງໆ ຕ້ອງອີງໃສ່ກົດໝາຍ ແລະ ລະບຽບການຂອງແຕ່ລະປະເທດ ແລະ ການຕົກລົງທີ່ກ່ຽວຂ້ອງຂອງສອງຝ່າຍ.

## ມາດຕາ 3

1. ການເຂົ້າ-ອອກຕາມຊາຍແດນຂອງພົນລະເມືອງສອງຝ່າຍ ຕ້ອງນຳໃຊ້ໜັງສືຜ່ານແດນທີ່ຍັງມີຜົນບັງຄັບໃຊ້ ຫຼື ໜັງສືຢັ້ງຢືນການເດີນທາງສາກົນທີ່ສາມາດໃຊ້ແທນໜັງສືຜ່ານແດນໄດ້. ສ່ວນການເຂົ້າ-ອອກຕາມຊາຍແດນຂອງບຸກຄົນຈາກປະເທດທີສາມ ຕ້ອງນຳໃຊ້ໜັງສືຜ່ານແດນທີ່ຍັງມີຜົນບັງຄັບໃຊ້ ຫຼື ໜັງສືຢັ້ງຢືນການເດີນທາງສາກົນທີ່ສາມາດໃຊ້ແທນໜັງສືຜ່ານແດນໄດ້. ສຳລັບວຽກງານກ່ຽວພັນກັບການອອກວີຊາແມ່ນໃຫ້ປະຕິບັດຕາມການຕົກລົງທີ່ກ່ຽວຂ້ອງຂອງສອງຝ່າຍ.

2. ປະຊາຊົນທີ່ອາໄສຢູ່ຕາມຊາຍແດນຂອງສອງຝ່າຍ ສາມາດນຳໃຊ້ບັດເຂົ້າ-ອອກຕາມບໍລິເວນຊາຍແດນ ລາວ-ຈີນ ໃນການເຂົ້າ-ອອກຕາມຊາຍແດນ. ການອອກ ແລະ ການນຳໃຊ້ບັດເຂົ້າ-ອອກຕາມບໍລິເວນຊາຍແດນ ລາວ-ຈີນ ແມ່ນໃຫ້ປະຕິບັດຕາມ "ສັນຍາ ວ່າດ້ວຍລະບຽບການຄຸ້ມຄອງຊາຍແດນ ລະຫວ່າງ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາຊົນຈີນ".

3. ເພື່ອປະຕິບັດສິດ ແລະ ພັນທະຕາມການຕົກລົງໃນ " ສັນຍາ ວ່າດ້ວຍ ລະບຽບການຄຸ້ມຄອງຊາຍແດນ ລະຫວ່າງ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາຊົນຈີນ" ແລະ ບັນດາສັນຍາອື່ນໆທີ່ສອງຝ່າຍໄດ້ລົງນາມຮ່ວມກັນ, ໃນເວລາທີ່ດ່ານຊາຍແດນປິດບໍລິການ, ຜູ້ຕາງໜ້າຊາຍແດນ ແລະ ບຸກຄົນທີ່ກ່ຽວຂ້ອງຂອງສອງຝ່າຍ ສາມາດນຳໃຊ້ໜັງສືຢັ້ງຢືນທີ່ໄດ້ຜ່ານການຮັບຮອງຈາກສອງຝ່າຍ ເພື່ອເຂົ້າ-ອອກຕາມດ່ານຊາຍແດນໄດ້ ໂດຍຜ່ານການປຶກສາຫາລື ແລະ ເຫັນດີຈາກໜ່ວຍງານກວດກາຊາຍແດນຂອງສອງຝ່າຍ.

## ມາດຕາ 4

ໃນໄລຍະທີ່ດ່ານຊາຍແດນເປີດໃຊ້ບໍລິການ, ໜ່ວຍງານກວດກາດ່ານຊາຍແດນຂອງສອງຝ່າຍ ຕ້ອງປະຕິບັດໜ້າທີ່ຕາມລະບຽບກົດໝາຍຂອງປະເທດຕົນ. ບຸກຄົນ, ຍານພາຫະນະ, ສິນຄ້າ ແລະ ສິ່ງຂອງຕ່າງໆທີ່ເຂົ້າ-ອອກຕາມຊາຍແດນ ຕ້ອງຖືກກວດກາ ແລະ ກວດສອບຈາກໜ່ວຍງານກວດກາດ່ານຊາຍແດນ. ໃນກໍລະນີທີ່ຈຳເປັນ, ສອງຝ່າຍ ຫຼື ໜ່ວຍງານກວດກາດ່ານຊາຍແດນຂອງສອງຝ່າຍ ສາມາດສ້າງນິຕິກຳສະເພາະກ່ຽວກັບການຫຼຸດຜ່ອນຂັ້ນຕອນການກວດກາ .

## ມາດຕາ 5

1. ດ່ານທີ່ເປີດບໍລິການຢ່າງເປັນທາງການ ຈະບໍ່ປິດການບໍລິການໃນວັນພັກລັດຖະການຂອງສອງປະເທດ, ເວັ້ນເສຍແຕ່ສອງຝ່າຍມີການຕົກລົງນຳກັນຕ່າງຫາກ.

2. ຖ້າຕ້ອງການເປີດບໍລິການດ່ານຊົ່ວຄາວນອກໂມງລັດຖະການ, ສອງຝ່າຍຕ້ອງແຈ້ງໃຫ້ກັນຊາບ ແລະ ປຶກສາຫາລືນຳກັນລ່ວງໜ້າຢ່າງໜ້ອຍ 5 ວັນ ໂດຍຜ່ານທາງການທູດ. ການຢຸດຕິການບໍລິການດ່ານທີ່ເປີດບໍລິການຊົ່ວຄາວນັ້ນ ຕ້ອງແຈ້ງໃຫ້ອີກຝ່າຍໜຶ່ງຊາບ ແລະ ໄດ້ຮັບການຢືນຢັນຈາກຝ່າຍດັ່ງກ່າວ ໂດຍຜ່ານທາງການທູດ.

3. ໂດຍຄຳນຶງເຖິງການປົກປັກຮັກສາຜົນປະໂຫຍດຂອງສ່ວນລວມ ແລະ ຄວາມປອດໄພຂອງຊາດ ຫຼື ເຫດສຸດວິໄສທີ່ເກີດຈາກໄພພິບັດທາງທຳມະຊາດທີ່ຮ້າຍແຮງ ແລະ ພະຍາດລະບາດອື່ນໆທີ່ບໍ່ສາມາດຫຼີກລ່ຽງໄດ້, ຝ່າຍໜຶ່ງສາມາດປິດການບໍລິການດ່ານຊົ່ວຄາວ ຫຼື ນຳໃຊ້ມາດຕະການຈຳກັດການຜ່ານດ່ານ, ແຕ່ຕ້ອງແຈ້ງໃຊ້ອີກຝ່າຍໜຶ່ງຊາບລ່ວງໜ້າ 5 ວັນ. ໃນກໍລະນີສຸກເສີນ, ສາມາດດຳເນີນການປິດການບໍລິການດ່ານ ຫຼື ນຳໃຊ້ມາດຕະການຈຳກັດການຜ່ານດ່ານໄດ້ເລີຍ, ຈາກນັ້ນຈຶ່ງແຈ້ງໃຫ້ອີກຝ່າຍໜຶ່ງຊາບພາຍໃນ 24 ຊົ່ວໂມງ.

4. ນອກຈາກເຫດການທີ່ໄດ້ລະບຸໄວ້ໃນຂໍ້ 3 ຂອງມາດຕານີ້, ຝ່າຍໃດຝ່າຍໜຶ່ງບໍ່ສາມາດດຳເນີນການປິດດ່ານຝ່າຍດຽວໄດ້ ຖ້າບໍ່ໄດ້ຮັບການເຫັນດີຈາກອີກຝ່າຍໜຶ່ງ. ຖ້າຫາກຝ່າຍໃດໜຶ່ງ ດຳເນີນການປິດດ່ານໂດຍບໍ່ໄດ້ຮັບການເຫັນດີຈາກອີກຝ່າຍໜຶ່ງ ຊຶ່ງສົ່ງຜົນກະທົບ ແລະ ສ້າງຄວາມເສຍຫາຍໃຫ້ອີກຝ່າຍໜຶ່ງ, ສອງຝ່າຍຕ້ອງດຳເນີນການປຶກສາຫາລື ແລະ ແກ້ໄຂບັນຫາດັ່ງກ່າວ ໂດຍຜ່ານທາງການທູດ.

## ມາດຕາ 6

ສອງຝ່າຍຈະສົ່ງເສີມການກໍ່ສ້າງພື້ນຖານໂຄງລ່າງຢູ່ດ່ານຊາຍແດນ, ປັບປຸງເງື່ອນໄຂເພື່ອອໍານວຍຄວາມສະດວກໃນການເຂົ້າ-ອອກດ່ານໃຫ້ດີຂຶ້ນກວ່າເກົ່າ, ຍົກລະດັບການບໍລິການໃນການເຂົ້າ-ອອກໃຫ້ດີຂຶ້ນ. ການອອກແບບ ແລະ ການກໍ່ສ້າງດ່ານຊາຍແດນ ຕ້ອງໄດ້ຄໍານຶງເຖິງຄວາມຮຽກຮ້ອງຕ້ອງການຂອງການພັດທະນາ ແລະ ການຂະຫຍາຍດ່ານໃນອະນາຄົດ.

## ມາດຕາ 7

ເພື່ອຈັດຕັ້ງປະຕິບັດສັນຍາສະບັບນີ້ໃຫ້ມີປະສິດທິຜົນ, ສອງຝ່າຍສາມາດສ້າງຕັ້ງກົນໄກໃນການປະຕິບັດສັນຍາ ດັ່ງນີ້:

1. ໜ່ວຍງານຄຸ້ມຄອງດ່ານຊາຍແດນ ແລະ ໜ່ວຍຄຸ້ມຄອງດ່ານຊາຍແດນຂອງອົງການປົກຄອງທ້ອງຖິ່ນຂອງສອງຝ່າຍ ສາມາດຮ່ວມກັນສ້າງຕັ້ງກົນໄກໃນການຮ່ວມມືທີ່ເໝາະສົມ, ເພີ່ມທະວີການຮ່ວມມື ແລະ ປະສານສົມທົບກັນ, ຄົ້ນຄວ້າມາດຕະການໃນການຍົກລະດັບປະສິດທິພາບຂອງການເຂົ້າ-ອອກດ່ານ, ພ້ອມທັງດໍາເນີນການຈັດຕັ້ງປະຕິບັດ.

2. ໜ່ວຍງານກວດກາດ່ານຊາຍແດນຂອງສອງຝ່າຍ ສາມາດຮ່ວມກັນສ້າງຕັ້ງກົນໄກປະສານງານທີ່ເທົ່າທຽມກັນ ແລະ ດໍາເນີນກອງປະຊຸມ, ພົບປະ ຫລື ແລກປ່ຽນບົດຮຽນ.

## ມາດຕາ 8

ສັນຍາສະບັບນີ້ບໍ່ມີຜົນກະທົບຕໍ່ສິດ ແລະ ພັນທະ ທີ່ລະບຸໄວ້ໃນ ສັນຍາ ແລະ ສົນທິສັນຍາສາກົນອື່ນໆທີ່ແຕ່ລະຝ່າຍໄດ້ລົງນາມ.

## ມາດຕາ 9

ຂໍ້ຂັດແຍ່ງຕ່າງໆທີ່ເກີດຂຶ້ນໃນການຕີຄວາມໝາຍ ຫຼື ການປະຕິບັດສັນຍາສະບັບນີ້, ສອງຝ່າຍຕ້ອງປຶກສາຫາລື ແລະ ຕົກລົງກັນ ໂດຍຜ່ານທາງການທູດ.

## ມາດຕາ 10

ໃນໄລຍະເວລາທີ່ສັນຍາສະບັບນີ້ມີຜົນບັງຄັບໃຊ້, ສອງຝ່າຍສາມາດດຳເນີນການດັດແກ້ ຫຼື ເພີ່ມເຕີມສັນຍາສະບັບນີ້ໄດ້ ພາຍຫຼັງທີ່ໄດ້ມີການປຶກສາຫາລື ແລະ ຕົກລົງກັນ.

## ມາດຕາ 11

ສັນຍາສະບັບນີ້ ຕ້ອງໄດ້ຜ່ານຂັ້ນຕອນດ້ານກົດໝາຍພາຍໃນທີ່ຈຳເປັນ ເພື່ອໃຫ້ສັດຕະຍາບັນ, ພ້ອມທັງແຈ້ງໃຫ້ກັນຊາບຢ່າງເປັນລາຍລັກອັກສອນ ໂດຍຜ່ານທາງການທູດ ແລະ ສັນຍາສະບັບນີ້ຈະມີຜົນບັງຄັບໃຊ້ ພາຍຫຼັງ 30 ວັນຂອງຈົດໝາຍແຈ້ງສະບັບສຸດທ້າຍ.

ສັນຍາສະບັບນີ້ ມີຜົນບັງຄັບໃຊ້ກຳນົດ 10 ປີ. ຖ້າຫາກຝ່າຍໃດຝ່າຍໜຶ່ງບໍ່ແຈ້ງຈຸດປະສົງ ຍົກເລີກສັນຍາສະບັບນີ້ຢ່າງເປັນລາຍລັກອັກສອນ ໃຫ້ອີກຝ່າຍໜຶ່ງຊາບລ່ວງໜ້າ 6 ເດືອນ ກ່ອນ ສັນຍາໝົດອາຍຸ, ສັນຍາສະບັບນີ້ຈະມີຜົນບັງຄັບໃຊ້ຕໍ່ໄປໃນຕົວອີກ 10 ປີ ແລະ ຈະມີຜົນບັງຄັບ ໃຊ້ຕໍ່ໆໄປອີກຕາມວິທີດັ່ງກ່າວນີ້.

ເຮັດທີ່ນະຄອນຫຼວງປັກກິ່ງ, ວັນທີ 23 ສິງຫາ 2011, ເປັນສອງສະບັບຕົ້ນ, ເປັນພາສາລາວ ແລະ ພາສາຈີນ, ທັງສອງສະບັບມີຄຸນຄ່າເທົ່າທຽມກັນ.

ຕາງໜ້າລັດຖະບານ ແຫ່ງ
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ຕາງໜ້າລັດຖະບານ ແຫ່ງ
ສາທາລະນະລັດ ປະຊາຊົນຈີນ

# ສະຖານທີ່ຕັ້ງ, ພາລະບົດບາດ, ລະດັບຂັ້ນ
# ແລະ ເວລາເຮັດວຽກຂອງດ່ານຊາຍແດນ ລາວ-ຈີນ

---------------

ດ່ານບໍ່ເຕັນ - ບໍ່ຫານ

ດ່ານນີ້ ແມ່ນດ່ານຊາຍແດນສາກົນທີ່ຂົນສົ່ງສິນຄ້າ ແລະ ຜູ້ໂດຍສານ ທາງບົກ. ດ່ານດັ່ງກ່າວແມ່ນແຍກກັນຕັ້ງຢູ່ສອງເບື້ອງຂອງຊາຍແດນ ຄື: ເມືອງຫຼວງນ້ຳທາ, ແຂວງຫຼວງນ້ຳທາ, ສປປ ລາວ ແລະ ເມືອງຫຼ້າ, ກິ່ງແຂວງສິບສອງພັນນາ, ມົນທົນຢຸນນານ, ສປ ຈີນ. ວັນເປີດບໍລິການດ່ານ ແມ່ນເລີ່ມແຕ່ ວັນຈັນ ເຖິງ ວັນອາທິດ. ເວລາເຮັດວຽກຂອງຝ່າຍລາວ ແມ່ນ ລະຫວ່າງ 7:30-20:30 ໂມງ (ເວລາຂອງ ສປປ ລາວ), ສ່ວນເວລາເຮັດວຽກຂອງຝ່າຍຈີນ ແມ່ນລະຫວ່າງ 8:30-21:30 ໂມງ (ເວລາປັກກິ່ງ).

ດ່ານລານຕູຍ - ເມືອງຄັງ

ດ່ານນີ້ ແມ່ນດ່ານຊາຍແດນສາກົນທີ່ຂົນສົ່ງສິນຄ້າ ແລະ ຜູ້ໂດຍສານ ທາງບົກ. ດ່ານດັ່ງກ່າວແມ່ນແຍກກັນຕັ້ງຢູ່ສອງເບື້ອງຂອງຊາຍແດນ ຄື: ເມືອງຍອດອູ, ແຂວງຜົ້ງສາລີ, ສປປ ລາວ ແລະ ຕາແສງຈຽງເຊີງ, ເມືອງຜູເອີ່, ມົນທົນຢຸນນານ, ສປ ຈີນ.

ດ່ານປ່າຄາ - ມານຈອງ

ດ່ານນີ້ ແມ່ນດ່ານຊາຍແດນສອງຝ່າຍທີ່ຂົນສົ່ງສິນຄ້າ ແລະ ຜູ້ໂດຍສານ ທາງບົກ. ດ່ານດັ່ງກ່າວແມ່ນແຍກກັນຕັ້ງຢູ່ສອງເບື້ອງຊາຍແດນ ຄື: ເມືອງບຸນເໜືອ, ແຂວງຜົ້ງສາລີ, ສປປ ລາວ ແລະ ເມືອງຫຼ້າ, ກິ່ງແຂວງສິບສອງພັນນາ, ມົນທົນຢຸນນານ, ສປ ຈີນ.

ດ່ານປາງໄຮ່ - ເມືອງມານ

ດ່ານນີ້ ແມ່ນດ່ານຊາຍແດນສອງຝ່າຍທີ່ຂົນສົ່ງສິນຄ້າ ແລະ ຜູ້ໂດຍສານ ທາງບົກ. ດ່ານດັ່ງກ່າວແມ່ນແຍກກັນຕັ້ງຢູ່ສອງເບື້ອງຊາຍແດນ ຄື: ເມືອງສິງ, ແຂວງຫຼວງນ້ຳທາ, ສປປ ລາວ ແລະ ເມືອງຫຼ້າ, ກິ່ງແຂວງສິບສອງພັນນາ, ມົນທົນຢຸນນານ, ສປ ຈີນ.